ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 31 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 2 ສິງຫາ 2016

ສຳນັກງານ ຄຄຊ
ເລກທີ.0759
ວັນທີ 03 AUG 2016
ໂທລະສັບ 021 217770

ລາຍງານການເຄື່ອນໄຫວປະຈຳອາທິດ
ທີ 18/07/2016 ຫາ 22/07/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນເອີໂຣ ແຕ່ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງເມື່ອທຽບໃສ່ເງິນເງິນໂດລາສະຫະລັດ ຍ້ອນຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາດີ ເປັນຕົ້ນແມ່ນຍອດສິນຄ້າຂາຍຍ່ອຍລ່ວງໜ້າ (Advance Retail Sales) ໃນເດືອນ 6/2016 ເພີ່ມຂຶ້ນເປັນ 0,6% ຈາກ 0,2% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 15/07/2016 | ອາທິດນີ້ 22/07/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1.1141 | 1.1027 | 1.03% |
| ໂດລາ/ເຢນ | 105.99 | 106.09 | -0.09% |
| ໂດລາ/ບາດ | 34.920 | 34.930 | -0.03% |
| ໂດລາ/ເປໂຊ | 46.75 | 47.08 | -0.71% |
| ໂດລາ/ຣູເປັຍ | 13.090.00 | 13.107.00 | -0.13% |
| ໂດລາ/ໂດລາສິງກະໂປ | 1.3434 | 1.3558 | -0.91% |
| ໂດລາ/ຢວນ | 6.6806 | 6.6715 | 0.14% |

1.2 ສະພາບລາຄານໍ້າມັນ ແລະ ຄໍາໃນຕະຫຼາດໂລກ

ລາຄານໍ້າມັນໃນຕະຫຼາດໂລກຫຼຸດລົງ 1,09% ຈາກ 47,90 ໂດລາ/ບາເຣວ ມາເປັນ 47,38 ໂດລາ/ບາເຣວ ພາຍຫຼັງບໍລິສັດຂຸດເຈາະນໍ້າມັນ Baker Hughes ລາຍງານຕົວເລກແທ່ນຂຸດເຈາະນໍ້າມັນໃນສະຫະລັດຮອດວັນທີ 22/7/16 ເພີ່ມຂຶ້ນຈໍາ

ນອນ 14 ແທ່ນ ແລະ ມີຈໍານວນແທ່ນຂຸດເຈາະນໍ້າມັນດິບທັງໝົດ 371 ແທ່ນ. ສໍາລັບລາຄາຄໍາໃນຕະຫຼາດໂລກຫຼຸດລົງ 0,48% ຈາກ 1.331,96 ມາເປັນ 1.325,63 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,08% ສໍາລັບອັດຕາ ທຫລ ແຕ່ແຂງຄ່າຂຶ້ນ 0,01% ສໍາລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,21% ສໍາລັບອັດຕາ ທຫລ ແຕ່ແຂງຄ່າຂຶ້ນ 0,03% ສໍາລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,60% ສໍາລັບອັດຕາ ທຫລ ແລະ ແຂງຄ່າຂຶ້ນ 0,82% ສໍາລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 2% ສໍາລັບອັດຕາ ທຫລ ແລະ ອ່ອນຄ່າລົງ 1,57% ສໍາລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 15/07/2016 | | | ອາທິດນີ້ 22/07/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.088,62 | 8.116,99 | 8.097,83 | 8.090,40 | 8.120,00 | 8.104,35 | -0,02% | -0,04% | -0,08% |
| ບາດ | 231,07 | 232,69 | 232,47 | 231,92 | 233,40 | 232,95 | -0,37% | -0,30% | -0,21% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.122,53 | 8.147,83 | 8.135,18 | 8.120,98 | 8.147,90 | 8.134,44 | 0,02% | 0,00% | 0,01% |
| ບາດ | 232,06 | 233,14 | 232,60 | 232,13 | 232,93 | 232,53 | -0,03% | 0,09% | 0,03% |
| ຜົດຕ່າງອັດຕາ ທຫລ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,42% | 0,38% | 0,46% | 0,38% | 0,34% | 0,37% | | | |
| ບາດ | 0,43% | 0,19% | 0,06% | 0,09% | -0,20% | -0,18% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈໍາອາທິດນີ້ເພີ່ມຂຶ້ນ 1,15% ທຽບໃສ່ວັນທີ 15/07/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຫຼຸດລົງ 1,96%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,84% ເມື່ອທຽບໃສ່ວັນທີ 15/07/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,28%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈໍາອາທິດ (ວັນທີ 18-22/07/2016) ເຫັນວ່າ ທທກ ຊື້ໂດລາສຸດທິ 14,53 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 44,78 ລ້ານໂດລາ ແລະ ຂາຍໂດລາໄດ້ 30,25 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 989,02 ລ້ານບາດ (ໃນນີ້ ຊື້ບາດໄດ້ 211,50 ລ້ານບາດ ແລະ ຂາຍບາດໄດ້ 1.200,52 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 14,78% ແຕ່ເພີ່ມຂຶ້ນ 19,08% ສໍາລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 0,41 ລ້ານໂດລາ ແຕ່ເງິນບາດບໍ່ມີການຊື້-ຂາຍ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນໍ້າໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 8,25 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 17 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ແມ່ນບໍ່ມີການຊື້-ຂາຍ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 11-15/07/2016 | | ອາທິດທີ 18-22/07/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **32,02** | **202,34** | **44,78** | **211,50** | **-14,11%** | **-36,26%** |
| - ທ/ຄທຸລະກິດລັດ | 10,95 | 129,34 | 11,50 | 115,40 | 14,85% | -43,29% |
| - ທ/ຄທຸລະກິດອື່ນໆ | 21,06 | 73,00 | 33,28 | 96,10 | -23,38% | -20,36% |
| 2. ການຂາຍເງິນຕາຕ່າງປະເທດ | **56,03** | **983,46** | **30,25** | **1.200,52** | **-27,45%** | **-21,45%** |
| - ທ/ຄທຸລະກິດລັດ | 12,11 | 223,99 | 14,53 | 193,55 | -36,69% | 13,32% |
| - ທ/ຄທຸລະກິດອື່ນໆ | 43,92 | 759,46 | 15,73 | 1.006,98 | -7,34% | -26,37% |
| ຊື້-ຂາຍສຸດທິ ທທກ | **-24,01** | **-781,12** | **14,53** | **-989,02** | **10,50%** | **-17,31%** |
| ຜິດດ່ຽງ ຊື້-ຂາຍ | -75,01% | -386,05% | 32,44% | -467,62% | 28,65% | 29,71% |
| ມູນຄ່າການຊື້-ຂາຍ | **88,05** | **1.185,79** | **75,04** | **1.412,02** | **-19,36%** | **-24,10%** |
| 3. ການຊື້ຂາຍລະຫວ່າງທຫລ ກັບ ທທກ | **-8,85** | **-70,50** | **-8,25** | **-17,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 8,85 | 70,50 | 8,25 | 17,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **1,73** | **16,00** | **0,41** | **0,00** | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 06/2016 ຢູ່ໃນລະດັບ 1,62% ເພີ່ມຂຶ້ນ 1,17% ຈາກ 0,45% ໃນເດືອນ 05/2016 ສາເຫດຂອງການເພີ່ມຂຶ້ນແມ່ນມາຈາກການປັບຂຶ້ນຂອງລາຄານ້ຳມັນເຊື້ອໄຟ ຊຶ່ງສົ່ງຜົນໃຫ້ໝວດຄົມມະນາຄົມ-ຂົນສົ່ງ ເພີ່ມຂຶ້ນ 1,18% ມາເປັນ 2,19% ບວກກັບໝວດອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ ເພີ່ມຂຶ້ນ 0,89% ທຽບໃສ່ ເດືອນຜ່ານມາ ເປັນຕົ້ນແມ່ນລາຄາປະເພດເຂົ້າສານ ເພີ່ມຂຶ້ນ 1,08%; ລາຄາຊີ້ນເພີ່ມຂຶ້ນ 0,19% ແລະ ຜັກສົດຕ່າງໆ ເພີ່ມຂຶ້ນ 5,65%.

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 77,4 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 30,5 ທຽບໃສ່ອາທິດຜ່ານມາ.

III. ວຽກງານວິຊາສະເພາະ

1. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (15-21/07/2016) ມີຈຳນວນ 661 ຄັ້ງ ໂດຍມີມູນຄ່າ 326,73 ຕື້ກີບ ຊຶ່ງທະນາຄານສົ່ງເສີມກະສິກຳ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 165 ຄັ້ງ.

2. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.096,26 ຈຸດ ຫຼຸດລົງ 0,15% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 49.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 233,58 ລ້ານກີບ ເພີ່ມຂຶ້ນ 22,03% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 48,74% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.661 ກີບ/ຮຸ້ນ ຫຼຸດລົງ 42 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 19.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 89,95 ລ້ານກີບ ເພີ່ມຂຶ້ນ 110,18% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 32,08% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,31%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.512 ກີບ/ຮຸ້ນ ຫຼຸດລົງ 13 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 22.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 122,36 ລ້ານກີບ ຫຼຸດລົງ 11,06% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 46,91% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,84%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 6.450 ກີບ/ຮຸ້ນ ຫຼຸດລົງ 50 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາປິດ 2.600 ກີບ/ຮຸ້ນ ຫຼຸດລົງ 2 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 7.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 19,76 ລ້ານກີບ ເພີ່ມຂຶ້ນ 171,24% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 43,29% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.000 ກີບ/ຮຸ້ນ ຫຼຸດລົງ 100 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,5 ລ້ານກີບ ຫຼຸດລົງ 51,61% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 25% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[6].

2. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສຳເລັດການ: ❶ເຂົ້າຮ່ວມກອງປະຊຸມກວດກາທົ່ວປະເທດຄັ້ງທີ 3 ທີ່ຫ້ອງວ່າການສູນກາງພັກ ຫຼັກ 6, ❷ເຂົ້າຮ່ວມກອງປະຊຸມລັດຖະບານປະຈຳເດືອນ ກໍລະກົດ 2016 ທີ່ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ❸ເຂົ້າຮ່ວມໂອ້ລົມໃນພິທີຮັບສະມະຊິກພັກສຳຮອງໃໝ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
- ສຳເລັດການຈັດ: ❶ກອງປະຊຸມຄົ້ນຄວ້າເນື້ອໃນມາດຕາ 295 ຂອງ ຮ່າງປະມວນກົດໝາຍອາຍາ ທີ່ ທຫລ, ❷ກອງປະຊຸມຮ່ວມກັບກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ປະກັນໄພ, ກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ AML/CFT ທີ່ ສຳນັກງານຂໍ້ມູນຕ້ານການຟອກເງິນ;
- ສຳເລັດການເຂົ້າຮ່ວມ: ❶ກອງປະຊຸມປຶກສາຫາລື ກ່ຽວກັບຄຳສັ່ງວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ 9 ເດືອນ ຄາດຄະເນການຈັດຕັ້ງປະຕິບັດ ສົກປີ 2015-2016 ແລະ ກະ

---

ລາຄາສະເລ່ຍ ແມ່ນລາຄາທີ່ສະເລ່ຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສຳລັບຜູ້ລົງທຶນປະເພດສະຖາບັນ;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສຳລັບຜູ້ລົງທຶນປະເພດສະຖາບັນ;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[6] ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

ກຽມແຜນງົບປະມານປະຈຳປີ 2017 ທີ່ ທຫລ, ❷ສຳມະນາ ໃນຫົວຂໍ້: "Financial Investigation for Public Corruption" ທີ່ ປະເທດໄທ, ❸ເຂົ້າຮ່ວມກອງປະຊຸມວຽກງານກວດກາທົ່ວປະເທດຄັ້ງທີ III ທີ່ສະໂມສອນໃຫຍ່ຂອງຫ້ອງວ່າການສູນກາງພັກ, ❹ສຳມະນາ ໃນຫົວຂໍ້ "China: Opportunities and Challenge for Central Banks" ຢູ່ຮ່ອງກົງ, ສປ.ຈີນ;

- ສຳເລັດການເຂົ້າຢ້ຽມຊົມຫ້ອງມູນເຊື້ອຂອງສູນກາງສະຫະພັນແມ່ຍິງລາວ ເນື່ອງໃນໂອກາດວັນສ້າງຕັ້ງສະຫະພັນແມ່ຍິງລາວຄົບຮອບ 61 ປີ.

3. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ກະກຽມການ: ❶ຕ້ອນຮັບການເຂົ້າຢ້ຽມຂຳນັບຈາກປະທານສະພາບໍລິຫານ ທະນາຄານຫວຽດຕິນ ທີ່ ທຫລ, ❷ເປັນປະທານກອງປະຊຸມຄະນະປະຈຳພັກ-ຄະນະຜູ້ວ່າການ ປະຈຳເດືອນກໍລະກົດ ຄັ້ງທີ 2 ທີ່ ທຫລ, ❸ເຂົ້າຮ່ວມກອງປະຊຸມຜູ້ວ່າການ ທະນາຄານກາງ CLMV ທີ່ນະຄອນຫຼວງຢາງກຸ້ງ ປະເທດມຽນມາ, ❹ເຂົ້າຮ່ວມງານເປີດເຂດພັດທະນາຄົບວົງຈອນໜອງທາ ຂອງທະນາຄານ BIDV ທີ່ນະຄອນຫຼວງວຽງຈັນ, ❺ເຂົ້າຮ່ວມງານພົບປະລະຫວ່າງພະນະທ່ານນາຍົກລັດຖະມົນຕີກັບພາກທຸລະກິດ ແລະ ງານມອບລາງວັນທຸລະກິດດີເດັ່ນຂອງ ສປປ ລາວ 2016 ເນື່ອງໃນໂອກາດວັນສະຖາປະນາ ສປປ ລາວ ຄົບຮອບ 40 ປີ, ເນື່ອງໃນໂອກາດການເປັນປະທານສະພາທີ່ປຶກສາທຸລະກິດອາຊຽນ 2016 ຂອງ ສປປ ລາວ ແລະ ວັນສ້າງຕັ້ງ ສຄອ ແຫ່ງຊາດລາວ ຄົບຮອບ 25 ທີ່ ໂຮງແຮມ ດອນຈັນພາເລດ;
- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າກ່ຽວກັບການກຳນົດຮູບແບບ ແລະ ທ່າອ່ຽງຂອງການຟອກເງິນ (Typology) ຂອງ ສປປ ລາວ, ❸ຄົ້ນຄວ້າການສ້າງລະບຽບ ການຄຸ້ມຄອງລະບົບເຄືອຂ່າຍ ແລະ ແມ່ຂ່າຍພາຍໃນ ທຫລ;
- ສືບຕໍ່ສ້າງປຶ້ມຄູ່ມືຖອດຖອນບົດຮຽນການເປັນປະທານ ແລະ ເຈົ້າພາບກອງປະຊຸມຂັ້ນສູງວຽກງານອາຊຽນ ແລະ ອາຊຽນ+3 ຂອງຂະແໜງການທະນາຄານ ທີ່ນະຄອນຫຼວງວຽງຈັນ;
- ສືບຕໍ່ກະກຽມເປີດກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈຳປີ 2016;
- ສືບຕໍ່ກະກຽມເປີດກອງປະຊຸມສະພາບໍລິຫານ ສະຖາບັນການທະນາຄານ ສະໄໝສາມັນ ຄັ້ງທີ II ປະຈຳປີ 2016;
- ກະກຽມເຂົ້າຮ່ວມ: ❶ສຳມະນາ ໃນຫົວຂໍ້: Operational and Technology Risk Management and Supervision" ທີ່ປະເທດມາເລເຊຍ, ❷ກອງປະຊຸມຄັ້ງທີ II ຄະນະກຳມະການສົ່ງເສີມການເຂົ້າເຖິງການບໍລິການທາງດ້ານການເງິນ ທີ່ປະເທດ ສສ ຫວຽດນາມ ແລະ ຄັ້ງທີ III ທີ່ປະເທດ ບຣູໄນ;
- ກະກຽມຈັດ: ❶ກອງປະຊຸມ ປັບປຸງຮ່າງຍຸດທະສາດການເຂົ້າເຖິງການບໍລິການທາງການເງິນທີ່ຫຼາກຫຼາຍ, ❷ກອງປະຊຸມລວມທົ່ວ ສທຄ ເພື່ອເຜີຍແຜ່ກົດລະບຽບ ແລະ ຂໍ້ຕົກລົງສະບັບປັບປຸງໃໝ່ ຂອງ ສທຄ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ເພັດສະຖາພອນ ແກ້ວວົງວິຈິດ